ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ຫ້ອງການລັດຖະບານ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ແບບຟອມບົດສະເໜີໂຄງການ

ຂໍ້ແນະນຳ:

- *ຄຳຮ້ອງສາມາດຍື່ນເປັນພາສາລາວ.*
- *ບັນທັດຖານທີ່ຈະໄດ້ທຶນມີດັ່ງຕໍ່ໄປນີ້: (i) ສະໜັບສະໜຸນນະໂຍບາຍ, ຍຸດທະສາດແລະແຜນການຂອງ ລັດຖະບານ /ແຂວງ; (ii) ຖືກກັບໜຶ່ງຂອງເຂດຂອງກອງທຶນຍ່ອຍຂອງ ກປສ (ນະໂຍບາຍແລະສ້າງ ຄວາມສາມາດ, ຊີວະນາໆພັນ, ຄວບຄຸມມົນລະພິດ, ຄຸ້ມຄອງ ຊັບພະຍາກອນນ້ຳ, ຄຸ້ມຄອງທີ່ດິນ); (iii) ຖືກກັບຕົວຊີ້ວັດຢ່າງໜ້ອຍ 1 ຕົວຂອງ ກປສ (iv) ບໍ່ມີກິດຈະກຳທີ່ເກືອດຫ້າມ.*
- *ໂຄງການຍ່ອຍ, ຖ້າແມ່ນຫຼາຍປີ, ຈະໄດ້ຕ້ອງມີຜົນງານທີ່ດີເພື່ອຈະຕໍ່ໃນປີຕໍ່ໄປ. ການປະເມີນຜົນງານ ປະຈຳປີ ພິວພັນ ກັບທຶນ, ການຄຸ້ມ ຄອງແລະຜົນໄດ້ຮັບໃນປີນັ້ນ ຊຶ່ງໄດ້ກຳນົດໄວ້.*

ເອກະສານບົດສະເໜີໂຄງການຍ່ອຍ ຂອງ ກປສ:

1. ຊື່ ແລະ ທີ່ຢູ່ຂອງຜູ້ສະເໜີຈັດຕັ້ງ ປະຕິບັດ ໂຄງການຍ່ອຍ:	ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຜົ້ງສາລີ ຖະໜົນ 19 B, ບ້ານໂພນແກ້ວ, ເມືອງຜົ້ງສາລີ, ແຂວງຜົ້ງສາລີ ໂທລະສັບ: 088 210570, ແຟັກ 088210611
2. ຊື່, ໜ້າທີ່, ບ່ອນພົວພັນລະອຽດ ຈຸດປະສານງານ ຜູ້ສະເໜີຈັດຕັ້ງ ປະຕິບັດ ໂຄງການຍ່ອຍ:	• ທ່ານ **ສຸລິຍາ ແສງດາລາ**, ຮອງຫົວໜ້າພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງຜົ້ງສາລີ ເປັນຜູ້ຊີ້ນຳໂຄງການ • ທ່ານ **ວຽງສັກ ພົມມະສິ**, ຫົວໜ້າຂະແໜງຄຸ້ມຄອງຊັບພະຍາກອນ ປ່າໄມ້, • ແຂວງຜົ້ງສາລີ ເປັນຫົວໜ້າໂຄງການ **ໂທ: 020 55932155, 020 23907080**
3. ລະດັບພື້ນທີ່ຂອງໂຄງການຍ່ອຍ *(ອາດຫລາຍກ່ວາ 1 ທາງເລືອກ)*	☐ ລະດັບສາກົນ ☐ ລະດັບສູນກາງ/ຊາດ ☑ ລະດັບແຂວງ/ເມືອງ ກະລຸນາບອກຊື່ແຂວງເປົ້າໝາຍ: ແຂວງຜົ້ງສາລີ ☑ ປ່າສະຫງວນ: ນ້ຳລານ ເມືອງບຸນໃຕ້

4. ຊື່ໂຄງການຍ່ອຍ	ໂຄງການຄຸ້ມຄອງປ່າສະຫງວນນ້ຳລານເມືອງບຸນໃຕ້ ແຂວງຜົ້ງສາລີ
5. ຈຳນວນທຶນທີ່ຂໍ : *(ເງິນໂດຍເງິນປະມານເປັນເງິນກີບ)*	600,000,000.00 ກີບ
6. ກອງທຶນຍ່ອຍຂອງ ກປສ ທີ່ໃຫ້ທຶນ *(ໃຫ້ໝາຍເອົາຫຼາຍກວ່າ 1 ທາງເລືອກ)*	☐ ນະໂຍບາຍ ☑ ຊີວະນາໆພັນ ☐ ຄວບຄຸມມົນລະພິດ ☐ ຄຸ້ມຄອງຊັບພະຍາກອນນ້ຳ ☐ ຄຸ້ມຄອງທີ່ດິນ
7. ໜ້າວຽກການຈັດຕັ້ງປະຕິບັດ ຫຼື ຂະແໜງການທີ່ພົວພັນກັບໂຄງການຍ່ອຍ, ສິ່ງທ້າທາຍແລະບຸລິມະສິດ *(ອະທິບາຍກ່ຽວກັບໜ້າທີ່ຂອງຜູ້ສະເໜີ, ຄວາມອາດສາມາດ ແລະ ໜ້າວຽກທີ່ເຮັດ ໃນປະຈຸບັນ ທີ່ພົວພັນກັບປ່າສະຫງວນ, ສັດປ່າ, ສິ່ງແວດລ້ອມ, ການປ້ອງກັນທາງ ສັງຄົມ, ສິ່ງທ້າທາຍ, ບຸລິມະສິດທີ່ຕ້ອງ ການ ແລະສະເໜີແນວທາງ ໃນການແກ້ໄຂ ບຸລິມະສິດ ແລະ ຂໍ້ຄົງຄ້າງດັ່ງກ່າວ)*	*ສະພາບລວມຂອງແຂວງ* ແຂວງຜົ້ງສາລີເປັນແຂວງໜຶ່ງທີ່ຕັ້ງຢູ່ພາກເໜືອສຸດຂອງ ສປປ ລາວ ປະກອບ ມີ 7 ເມືອງ ຄື: ເມືອງຜົ້ງສາລີ, ເມືອງຍອດອູ, ເມືອງບຸນເໜືອ, ເມືອງບຸນໃຕ້, ເມືອງສໍາພັນ, ເມືອງຂວາ ແລະ ເມືອງໃໝ່ , ຕິດກັບ 3 ແຂວງຄື: ແຂວງອຸດົມໄຊ, ຫຼວງນ້ຳທາ ແລະ ຫຼວງພະບາງ ມີຊາຍແດນຕິດກັບ ສປ ຈີນ ແລະ ສສ ຫວຽດນາມ ປ່າສະຫງວນນ້ຳລານ ແມ່ນເປັນປ່າສະຫງວນລະດັບແຂວງ ມີເນື້ອທີ 15.200 ເຮັກຕາ, ມີບ້ານທີ່ຢູ່ໃນແລະອ້ອມຂ້າງປ່າສະຫງວນນ້ຳລານ ຈຳນວນ 10 ບ້ານ: 1. ບ້ານນາມາກ, 2. ບ້ານຈາລອງລີ, 3. ບ້ານນາແຕນ, 4. ບ້ານຊາປາ, 5. ບ້ານໝູຕຶນ, 6. ບ້ານຈາຄຳແດງ, 7. ບ້ານຈາລອງໃໝ່, 8. ບ້ານປາງໃຄ, 9. ບ້ານລ່ອງນາຍໃໝ່ ແລະ 10. ບ້ານລ່ອງນາຍເກົ່າ. *ພາລະບົດບາດແລະໜ້າທີ່ຂອງຂະແໜງຄຸ້ມຄອງຊັບພະຍາກອນ ປ່າໄມ້ ແຂວງຜົ້ງສາລີ* ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ (ຂຄຊປ) ເປັນ ຂະແໜງ ທີ່ສ້າງຕັ້ງຂຶ້ນໃໝ່ໃນ ພຊສ ແຂວງ, ມີພາລະບົດບາດ ເປັນເສນາທິການ ໃຫ້ແກ່ ການນຳຂອງ ພຊສ ໃນການຄຸ້ມຄອງ, ປົກປັກ ຮັກສາ, ຟື້ນຟູປ່າສະຫງວນແລະປ່າປ້ອງກັນພາຍໃນແຂວງ. ພະນັກງານຄຸ້ມຄອງຊັບພະຍາກອນປ່າໄມ້ທັງໝົດ 9 ຄົນ, ຍິງ 2 ຄົນ ລວມທັງອາສາສະໝັກ ທີ່ບັນຈຸເຂົ້າໃນ 3 ໜ່ວຍງານຄື: ໜ່ວຍງານຄຸ້ມຄອງປ່າສະຫງວນ, ໜ່ວຍງານຄຸ້ມຄອງປ່າປ້ອງກັນ ແລະ ໜ່ວຍງານສຳຫຼວດ, ກວດກາ ປ່າສະຫງວນແລະປ່າປ້ອງກັນ. *ຄວາມອາດສາມາດໃນປະຈຸບັນ* ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ມີຄວາມພ້ອມ ທີ່ຈະດຳເນີນຈັດຕັ້ງປະຕິບັດໂຄງການ ເຊິ່ງມີ ພາຫະນະ ແລະ ອຸປະກອນຮັບໃຊ້ດັ່ງນີ້:

	1. ລົດກະບະ Nissan Navara 2 ຄັນ 2. ລົດຈັກ 2 ຄັນ 3. ຄອມພິວເຕີ ຕັ້ງໂຕະ 4 ເຄື່ອງ 4. ຄອມພິວເຕີ Note book 5 ໜ່ວຍ 5. Printer ສີ ແລະ ກົບປີ 3 ເຄື່ອງ, ຂາວ-ດຳ 2 ເຄື່ອງ 6. LCD 2 ຊຸດ 7. GPS 1 ໜ່ວຍ 8. ກ້ອງສ່ອງ 6 ໜ່ວຍ 9. ໂຟນີ 6 ໜ່ວຍ 10. ອຸປະກອນຈຳນວນໜຶ່ງເພື່ອຮັບໃຊ້ເຂົ້າໃນວຽກງານ ໂຄງການຄຸ້ມຄອງປ່າສະຫງວນນ້ຳລານ. *ສິ່ງທ້າທາຍ ແລະ ຄວາມຕ້ອງການຂອງຂະແໜງການ* ຄວາມພະຍາຍາມ ໃນການຄຸ້ມຄອງແລະປົກປັກຮັກສາປ່າສະ ຫງວນແຫ່ງນີ້ ມັນຍັງຂາດຫຼາຍປັດໄຈເປັນຕົ້ນ ແມ່ນການສ້າງຄວາມ ເຂັ້ມແຂງໃຫ້ພະນັກງານຂັ້ນເມືອງ ແລະ ສ້າງເຄືອຂ່າຍໃນ ການອະນຸລັກ ຂັ້ນບ້ານ ເພື່ອປັບປຸງການຮ່ວມມືໃນລະບົບການຄຸ້ມຄອງຊັບພະຍາກອນ ປ່າໄມ້ລະຫວ່າງລັດກັບຊຸມຊົນໃຫ້ດີຂຶ້ນ ມັນມີຄວາມຈຳເປັນຕ້ອງມີທຶນ ສຳລັບການເຄື່ອນໄຫວຄຸ້ມຄອງ, ທຶນສະໜັບສະໜູນກິດຈະກຳປັບປຸງ ຊີວິດການເປັນຢູ່ຂອງປະຊາຊົນ. *ຮູບແບບການຈັດຕັ້ງປະຕິບັດ* ຮູບແບບການຈັດຕັ້ງປະຕິບັດ ແມ່ນເນັ້ນໃສ່ຍົກສູງຄວາມເປັນເຈົ້າ ການ ໃນການເຂົ້າຮ່ວມຂອງເມືອງແລະບ້ານ ໂດຍໄດ້ຮັບການປຶກສາ ຫາລືກັນ ກັບ ບັນດາຂະແໜງການອື່ນໆທີ່ກ່ຽວຂ້ອງຂັ້ນແຂວງຢ່າງເປັນລະບົບ, ທຸກໆ 6 ເດືອນ. ພະແນກ ຊສ ແຂວງເປັນຜູ້ຊີ້ນຳໆພາ ຕິດຕາມກວດກາ ໃນການຈັດຕັ້ງປະຕິບັດ ໂຄງການຍ່ອຍ ຕາມແຜນການທີ່ໄດ້ຕົກລົງກັບ ກປສ ແລະ ມອບໝາຍວຽກງານ ຕ່າງໆໃຫ້ເມືອງ ເປັນຜູ້ຈັດຕັ້ງປະຕິບັດ (ຕາມທິດຂອງ 3 ສ້າງ), ສ້າງຄວາມສາມາດ ໃຫ້ເມືອງ ແລະ ຕິດຕາມແລະຊຸກຍູ້ການຈັດຕັ້ງປະຕິບັດພາກສະໜາມ.
8. ຈຸດປະສົງການຂອງໂຄງການຍ່ອຍ *(ໃຫ້ຂຽນພຽງປະໂຫຍກດຽວ)*	ເພື່ອສ້າງຄວາມອາດສາມາດໃນການຮ່ວມມືແບບມີສ່ວນຮ່ວມ ລະຫວ່າງ ລັດກັບຊຸມຊົນ ໃນການຄຸ້ມຄອງປົກປັກຮັກສາພັດທະນາ ປ່າສະຫງວນນ້ຳລານ ພ້ອມທັງປັບປຸງຊີວິດການເປັນຢູ່ປະຊາຊົນໃຫ້ນັບ ມື້ນັບດີຂຶ້ນ.
9. ນະໂຍບາຍ/ແຜນການ ແລະ ຍຸດທະສາດ ຂອງລັດຖະບານ ທີ່ສະໜັບສະໜູນ	ໂຄງການຍ່ອຍນີ້ ໄດ້ຮັບການສະໜັບສະໜູນ ຈາກບັນດາ ຍຸດທະສາດ ແຫ່ງຊາດ ແລະ ແຜນການຕ່າງໆ ທີ່ສຳຄັນໄດ້ແກ່:

ໂດຍໂຄງການຍ່ອຍ *(ລວມທັ້ງແຜນຍຸດທະສາດຂອງແຂວງ ຖ້າເຢັ້ນໂຢໄດ້)*	1. ກົດໝາຍວ່າດ້ວຍ ປ່າໄມ້ 2. ດຳລັດວ່າດ້ວຍ ປ່າສະຫງວນ 3. ລະບຽບວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດ 4. ລະບຽບວ່າດ້ວຍການຄຸ້ມຄອງປ່າສະຫງວນ ລະດັບແຂວງ ແລະ ບ້ານ 5. ຍຸດທະສາດດ້ານປ່າໄມ້ ຮອດປີ 2020 ເພື່ອເພີ້ມການປົກຫຸ້ມຂອງປ່າໄມ້ ໃຫ້ ໄດ້ 70%. 6. ໂຄງການຮ່ວມມືຮັກສາຊັບພະຍາກອນປ່າໄມ້ ລຽບຕາມຊາຍແດນລາວ-ຈີນ ຮ່ວມກັບຫ້ອງການປົກປັກຮັກສາຊັບພະຍາກອນປ່າໄມ້ຊຽງຮຸ່ງ ກົ່ງແຂວງສິບສອງພັນນາ ແຫ່ງ ສປ ຈີນ. 7. ແຜນ 5 ປີຂອງ ພຊສ ແຂວງຜົ້ງສາລີ .
10. ຜົນຮັບລະດັບພາກພື້ນ ແລະ ລະດັບໂລກ ທີ່ໂຄງການ ຍ່ອຍ ສະໜັບສະໜຸນ ຫຼືປະກອບສ່ວນ *(ເຊັ່ນ: ການຮ່ວມມືລະຫວ່າງຊາດ, ການແລກປ່ຽນຄວາມຮູ້, ປ້ອງກັນການຄ້າ-ຂາຍ ສັດປ່າ ທີ່ຜິດກົດໝາຍໃນຂອບເຂດ ພາກພື້ນ)*	ໂຄງການດັ່ງກ່າວ ຈະປະກອບສ່ວນໃນການຮັກສາ ຊັບພະຍາ ກອນປ່າ ໄມ້ລຽບຕາມຊາຍແດນ ລາວ-ຈີນ ຊຶ່ງມີການຮ່ວມມືກັບຫ້ອງ ການ ປົກປັກຮັກສາ ຊັບພະຍາກອນປ່າໄມ້ຊຽງຮຸ່ງ ກົ່ງແຂວງສິບສອງພັນນາ ແຫ່ງ ສປ ຈີນ.
11. ຕົວຊີ້ວັດຜົນຮັບຂອງໂຄງການຍ່ອຍ *(ຂຽນລາຍການຕົວຊີ້ວັດຜົນຮັບ ແລະ ຕົວຊີ້ ວັດຜົນຮັບຂອງ ກປສ ທີ່ພົວພັນຈາກ ກອບຜົນ ຮັບຂອງໂຄງການ ພ້ອມທັ້ງ ອະທິບາຍຕົວຊີ້ວັດ ຜົນຮັບສະເພາະຂອງ ໂຄງການຍ່ອຍ. ຜົນຮັບ ແລະຜົນກະທົບ ເປັນຜົນປະໂຫຍດໄລຍະຍາວ ໃດໜຶ່ງ ສະເພາະກ່ຽວກັບສິ່ງຂອງຫຼືການ ບໍລິການ ຕໍ່ກຸ່ມຜູ້ໄດ້ຮັບຜົນປະໂຫຍດເປົ້າໝາຍ)*	
12. ຜົນໄດ້ຮັບຕົ້ນຕໍຂອງໂຄງການຍ່ອຍ *(ສິ່ງຂອງຫຼືການບໍລິການທີ່ໄດ້ຮັບ ຈາກ ການ ກະທົບໃສ່ຂອງໂຄງການ (ໂຕຂັບ ເຄື່ອນການ ສະໜອງ) ເຊັ່ນ: ຈຳນວນ ພະນັກງານທີ່ໄດ້ຝຶກ, ເອກະສານຄູ່ມືເປັນ ຈຳນວນໜຶ່ງທີ່ໄດ້ສ້າງຂຶ້ນ)*	1. ບ້ານ ໄດ້ຮັບການຝຶກອົບຮົມການຄຸ້ມຄອງກອງທຶນບ້ານ, ເຕັກນິກ ການປູກຝັງ ລ້ຽງສັດຕ່າງໆທີ່ຈຳເປັນ ຈຳນວນ 100 ຄົນ ໃນນີ້ມີແມ່ຍິງ ຈຳນວນ 50 ຄົນ 2. ປະຊາຊົນ ໄດ້ເຂົ້າຮ່ວມທັດສະນະສຶກສາ ກ່ຽວກັບການມີສ່ວນຮ່ວມ ໃນການ ຄຸ້ມຄອງປ່າສະຫງວນ ແລະ ວຽກງານຮູບແບບການຜະລິດ ກະສິກຳທີ່ຍືນຍົງ 1 ຄັ້ງ, 50 ທ່ານຍິງ 20 ຄົນ) 3. ປະຊາຊົນ, ພະນັກງານ, ທະຫານ, ຕຳຫລວດ ແລະມວນຊົນບ້ານ ເປົ້າໝາຍ ຂອງໂຄງການ ໃນເຂດປ່າສະຫງວນ ໄດ້ຮັບຟັງການເຜີຍ ແຜ່ ລະບຽບກົດໝາຍ ໃນດ້ານການອະນຸລັກຊັບພະຍາກອນປ່າໄມ້ ແລະສິ່ງແວດລ້ອມ (1 ຄັ້ງ/ບ້ານ, ກົມກອງ ແລະ ໂຮງຮຽນ) 4. ສຳເລັດຂະບວນການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ດິນປ່າໄມ້ ແບບມີ ສ່ວນຮ່ວມ, ປັກປ້າຍແລະຫລັກໝາຍ (ດິນແຕ່ລະປະເພດ) ໃນຂອບເຂດ 10 ບ້ານ

	5. ໄດ້ກິດຈະກຳປັບປຸງຊີວິດການເປັນຢູ່ຂອງຊຸມຊົນ 10 ບ້ານຈາກ ຂະບວນການວາງແຜນພັດທະນາຊີວິດການເປັນຢູ່ແບບມີສ່ວນຮ່ວມ 6. ຈະມີຜົນໄດ້ຮັບຈາກວຽກງານກວດກາລາດຕະເວນຂອງ ຈຸດກວດກາໂດຍມີບົດລາຍງານຜົນງານທຸກໆ 3 ເດືອນ. 7. ມີເອກະສານພາລະບົດບາດ ແລະ ລະບຽບການຂອງບ້ານ ໃນການຄຸ້ມຄອງທີ່ດິນປ່າໄມ້ແລະຊັບພະຍາກອນປ່າໄມ້ ສັດນ້ຳ-ສັດປ່າ. 8. ກຳນົດວັງສະຫງວນຂອງບ້ານ ບ້ານລະ 1 ແຫ່ງ 10.ປະຊາຊົນໄດ້ຮັບທຶນສະໜັບສະໜຸນເຂົ້າໃນການພັດທະນາຊີວິດການເປັນຂອງຄອບຄົວແບບຄົງທີ່ (ກອງທຶນອະນຸລັກບ້ານ).

13. ອົງປະກອບແລະກິດຈະກຳ

(ຂຽນລາຍການອົງປະກອບ ແລະ ກິດຈະກຳທີ່ເຮັດໃຫ້ເກີດຜົນໄດ້ຮັບຂ້າງເທິງ ບໍ່ຄວນໃຫ້ຫລາຍກ່ວາ 5 ອົງປະກອບ (ເບິ່ງລາຍລະອຽດ ຢູ່ໃນແຜນວຽກ ແລະ ງົບປະມານປະຈຳປີຄັດຕິດ).

ອົງປະກອບ	ກິດຈະກຳຕົ້ນຕໍ
ອົງປະກອບ 1: ສ້າງຄວາມສາມາດໃນການຄຸ້ມຄອງປ່າສະຫງວນນ້ຳລາມ	***ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ (ສຳລັບ ປະຊາຊົນ)*** ຝຶກອົບຮົມດ້ານວິຊາການ ໃນການຄຸ້ມຄອງບໍລິຫານກອງທຶນບ້ານ ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກ ຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 4 ຄົນ ໃນນັ້ນມີແມ່ຍິງ 1 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 40 ຄົນ ຍິງ 10 ຄົນ. ***ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ)*** ຝຶກອົບຮົມດ້ານວິຊາການໃນການປູກຝັງ (ເຕັກນິກການປູກເຂົ້າ, ປູກສາລີ, ປູກມັນຕົ້ນ, ປູກພືດອື່ນໆ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ. ***ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ)*** ຝຶກອົບຮົມດ້ານວິຊາການໃນການລ້ຽງສັດ (ເຕັກນິກການລ້ຽງງົວ, ລ້ຽງແບ້, ລ້ຽງໝູ, ລ້ຽງໄກ່, ລ້ຽງເປັດ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາ

	ກອນ ບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ. *ກິດຈະກຳ 1.4: ໄປປະຊຸມນຳ ປກສ* ການເຂົ້າຮ່ວມກອງປະຊຸມຕ່າງໆ, ການເຂົ້າຮ່ວມປຶກສາຫາລືວຽກ ງານທີ່ຈຳເປັນ, ການຂຶ້ນໄປປຶກສາຫາລືບາງວຽກງານແລະອື່ນໆຢູ່ຫ້ອງການ ກປສ ທີ່ວຽງຈັນ ແລະ ບ່ອນອື່ນໆ. *ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ* ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ ລົງໄປ ຫາແຕ່ລະບ້ານເປົ້າໝາຍເພື່ອຮ່ວມປຶກສາຫາລືໃນການກະກຽມ ການດຳ ເນີນງານຂອງໂຄງການ ພ້ອມນີ້ກໍສ້າງໃຫ້ບ້ານຕ້ອງມີຄວາມເຂົ້າໃຈຕໍ່ ທິດທາງ,ແຜນການ ຈຸດປະສົງເປົ້າໝາຍ ຂອງໂຄງການ ທັງນີ້ກໍເພື່ອ ຄວາມສະດວກໃນການປະສານງານ ແລະ ການດຳເນີນ ໂຄງການຍ່ອຍ ຢູ່ແຕ່ລະບ້ານ ເຊິ່ງການລົງໄປຫາບ້ານຈະປະກອບມີຜູ້ຕາງໜ້າຄະນະ ກຳ ມະການຊີ້ນຳຂັ້ນແຂວງ, ຜູ້ປະສານງານຂັ້ນເມືອງ ໂດຍມີຈຳນວນຄົນ ຈຳນວນ 5 ຄົນ ຈາກເມືອງ ແລະ ແຂວງ. *ກິດຈະກຳ 1.6: ທັດສະນະສຶກສາແລກປ່ຽນບົດຮຽນກັບຕ່າງແຂວງ* ຄະນະໂຄງການ ນຳໂດຍຄະນະພະແນກ ຈະເຂົ້າຮ່ວມແລກປ່ຽນບົດຮຽນ ກັບບັນດາແຂວງທີ່ມີໂຄງການປະເພດດຽວກັນເພື່ອຖອດຖອນບົດຮຽນການຄຸ້ມຄອງ ແລະບໍລິຫານໂຄງການ ເພື່ອເປັນການສ້າງຄວາມເຂັ້ມ ແຂງອີກຮູບແບບນຶ່ງໃຫ້ແກ່ພະ ນັກງານດ້ວຍການຖອດຖອນບົດຮຽນ ຈາກ ບ່ອນທີ່ມີປະສົບການ ທີ່ມີຜົນສຳເລັດ ເພື່ອມາໝູນໃຊ້ໃນເຂດຂອງຕົນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ທີ່ຜ່ານມາໄດ້ ມີການປັບປຸງ ໃຫ້ມີ ປະສິດທິຜົນດີຂຶ້ນ ແຂວງຜົ້ງສາລີເປີດກອງປະຊຸມຖອດຖອນ ບົດຮຽນ ສິງຫາ 2018
ອົງປະກອບ 2. ສະໜັບສະໜຸນ ຄຸ້ມ ຄອງປ່າສະຫງວນ	*ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ* - ໂຄສະນາປຸກຈິດສຳນຶກໃນລະດັບພື້ນຖານ ໂດຍນຳໃຊ້ເຕັກນິກຕ່າງໆ, ເຜີຍ

	ແຜ່ລະບຽບກົດໝາຍ ແລະ ວິທີການທີ່ດີກ່ຽວກັບການຄຸ້ມຄອງ ຊັບພະຍາກອນທຳມະຊາດໂດຍຊຸມຊົນ ແລະ ປ່າສະຫງວນ, ນຳໃຊ້ເຄື່ອງມືປະຈັກຕາເຊັ່ນ ໂປສະເຕ, ລາຍການໂຄສະນາທາງວິທະຍຸ ກ່ຽວກັບກິດຈະກຳອະນຸລັກຊັບພະຍາກອນປ່າໄມ້ ແລະ ສັດນ້ຳ-ສັດປ່າ,ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ກ່ອນແລະຫລັງການຈັດຕັ້ງປະຕິບັດ. *ກິດຈະກຳ 2.2: ຄຸ້ມຄອງຈັດສັນທີ່ດິນ* - ລົງປຶກສາຮ່ວມປະຊາຊົນເພື່ອວາງແຜນການນຳໃຊ້ທີ່ດິນພ້ອມສ້າງ ແຜນທີ່ - ຮ່ວມກຳນົດເຂດການນຳໃຊ້ດິນແຕ່ລະປະເພດ ພາຍໃນບ້ານ. - ຮ່ວມສ້າງລະບຽບການຄຸ້ມຄອງນຳໃຊ້ທີ່ດິນຂັ້ນບ້ານ. - ຮ່ວມສ້າງຕັ້ງຄະນະກຳມະການຮັບຜິດຊອບຂັ້ນບ້ານ. - ຮ່ວມກຳນົດເຂດຄຸ້ມຄອງປ່າໄມ້ ແລະ ຟື້ນຟູປ່າໄມ້. - ຮ່ວມຈັດສັນເຂດຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ - ສ້າງ ແລະ ປັກປ້າຍຊີ້ບອກປະເພດເນື້ອທີ່ຕ່າງໆຂອງບ້ານ. - ສ້າງຕັ້ງໜ່ວຍງານຄຸ້ມຄອງອະນຸລັກຊັບພະຍາກອນປ່າໄມ້ຂັ້ນບ້ານໃນການຄຸ້ມຄອງປ່າສະຫງວນນ້ຳລານເພື່ອເຄື່ອນໄຫວຕິດຕາມກວດກາ ລາດຕະເວນ. *ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ* - ລົງຮ່ວມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ເພື່ອວາງແຜນປັບປຸງຊີວິດ ການເປັນຢູ່ຊຸມຊົນ. - ສະໜັບສະໜູນທຶນສ້າງເປັນກອງທຶນອະນຸລັກບ້ານ. *ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ* - ອອກແບບ, ກຳນົດຈຸດສ້າງຈຸດກວດກາຮ່ວມກັບເມືອງ ແລະ ບ້ານກ່ຽວຂ້ອງ - ປະມູນການກໍ່ສ້າງ - ຕິດຕາມການກໍ່ສ້າງ - ມອບ-ຮັບຈຸດກວດກາທີ່ກໍ່ສ້າງສຳເລັດ - ປະກອບພະນັກງານເຂົ້າປະຈຳ 2 ສະຫາຍ/ຈຸດກວດກາ - ອອກກວດກາລາດຕະເວນປົກກະຕິ.
ອົງປະກອບ 3: ຄຸ້ມຄອງ ບໍລິຫານ ໂຄງການ	ການບໍລິຫານ ແລະການຄຸ້ມຄອງໂຄງການ ຈະຕ້ອງໄດ້ປະຕິບັດຕາມຄູ່ມືການຈັດຕັ້ງປະຕິບັດໂຄງການ ລວມທັງການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການກວດກາຕິດຕາມແລະການລາຍງານ ໂດຍໄດ້ຮັບ ການຝຶກອົບຮົມຈາກ ກປສ ແລະ ຮັບປະກັນກິດຈະກຳດັ່ງຕໍ່ໄປນີ້: 3.1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈ ຮ່ວມກັນໃນທີມງານ

	3.2. ຈັດຊື້ອຸປະກອນ ໂຄງການ 3.3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ກ່ຽວກັບຄວາມຄືບໜ້າກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມທັງຕິວຊີ້ວັດ ແລະ ຜົນທີ່ໄດ້ຮັບ ແລະ ການເງິນ (ລວມທັງການຈັດຊື້) ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ. 3.4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ

14. ຜູ້ໄດ້ຮັບຜົນປະໂຫຍດທີ່ເປັນເປົ້າໝາຍ	❑ ພະນັກງານລັດ ຈຳນວນທັງໝົດ (0) ແມ່ຍິງ (0) *ລະດັບສູນກາງ* (-) ແມ່ຍິງ (-) *ລະດັບແຂວງ* (9) ແມ່ຍິງ (2) *ລະດັບເມືອງ* (5) ແມ່ຍິງ (1) ❑ *ບ້ານ* (10) ຈຳນວນຄົນ (3,262) ແມ່ຍິງ (1,558) ❑ ອື່ນໆ, ບອກຕື່ມ: ( )
15. ມື້ເລີ້ມທີ່ສະເໜີມາ	01/1/2016
16. ມື້ປິດທີ່ສະເໜີມາ	31/12/2020 (ໄລຍະ 5 ປີ)
17. ຜູ້ຮ່ວມທຶນ *(ແຫ່ງໃດແລະຈຳນວນເປັນເງິນ)*	ໃນແຕ່ລະປີ ທຶນປະກອນສ່ວນຂອງລັດຖະບານ ສປປ ລາວ ໂດຍທີ່ບໍ່ເປັນເງິນສົດ ໂດຍສະ ເພາະແມ່ນສະຖານທີ່ ແລະ ພະນັກງານ ວິຊາການຂອງລັດປະມານ 200 ລ້ານກີບ
18. ໂຄງການ/ແຜນງານເສີມສິ່ງໄດ້ລິເລີ້ມຫຼືກຳລັງດຳເນີນ *(ຊື່, ແຫຼ່ງທຶນ, ສາຍພົວພັນ)*	ໂຄງການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນຂອງ ກຄຊປ ເລື່ອງຕິດຕາມ ແລະ ປະເມີນຄວາມຄືບໜ້າໃນການປົກປັກຮັກສາປ່າປ້ອງກັນ (2.5 ລ້ານໂດລາ, ກປສ/ທະນາຄານໂລກ); ໂຄງການສ້າງຄວາມສາມາດໃນການຝຶກອົບຮົມຂອງຄະນະປ່າໄມ້, ມຊ, ເລື່ອງສ້າງພະນັກງານປ່າສະຫງວນແລະປ່າປ້ອງກັນ (2.5 ລ້ານໂດລາ, ກປສ/ທະນາຄານໂລກ).

19. ກົນໄກການຈັດຕັ້ງໂຄງການຍ່ອຍ

a) ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ.

b) ພະນັກງານແລະການຊ່ວຍເຫຼືອທາງວິຊາການທີ່ຕ້ອງການເພີ່ມເຕີມ ໃນດ້ານໃດ ເພື່ອເຮັດໃຫ້ໂຄງການຍ່ອຍທີ່ສະເໜີມາ ໄດ້ຮັບຜົນສຳເລັດ (ເຊັ່ນ: ພະນັກງານກວດກາຕິດຕາມ, ບັນຊີການເງິນ...).

a) *ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ*

ໂຄງການນີ້ ຈະຢູ່ພາຍໃຕ້ການນຳພາຂອງແຂວງ/ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ, ຊຶ່ງ ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງ ຈະເປັນຜູ້ຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໂດຍແຕ່ງຕັ້ງ ຄະນະຮັບຜິດຊອບໂຄງການຍ່ອຍຂຶ້ນ (ພາລະບົດບາດແລະຕຳແໜ່ງສຳຄັນຈະກຳນົດຕື່ມ) ເພື່ອ ຕິດຕາມ ກິດຈະກຳຂອງໂຄງການ. ສ່ວນຜູ້ປະສານງານໃນການຈັດຕັ້ງປະຕິບັດ ຈະໄດ້ມີການແຕ່ງຕັ້ງຈາກ ທ່ານເຈົ້າເມືອງ ເພື່ອຊີ້ນຳປະສານໃນການຈັດຕັ້ງປະຕິບັດກິດຈະກຳໃນພາກສະໜາມ. **ຄະນະກຳການອະນຸລັກ ຊັບພະຍາກອນປ່າໄມ້ຂັ້ນບ້ານ** ຈະໄດ້ຖືກສ້າງຂຶ້ນ ແລະ ຈະໄດ້ຖືກສ້າງຄວາມສາມາດດ້ວຍການຝຶກອົບຮົມ ແລະການໄປທັດສະນະສຶກສາເພື່ອປະສານງານໃນການຄຸ້ມຄອງຕິດຕາມກວດກາປ່າສະຫງວນນ້ຳລານ. ກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະປະສານ ແລະ ຕິດຕາມການຈັດຕັ້ງປະຕິບັດກິດຈະກຳ ໃນລະດັບ ແຂວງ, ເມືອງ ແລະ ບ້ານ ໃນຖານະເປັນຜູ້ໃຫ້ທຶນ ເພື່ອຮັບປະກັນໃຫ້ໂຄງການໄດ້ບັນລຸຕາມຈຸດປະສົງຂອງ ໂຄງການ.

1). **ໜ້າທີ່ແລະຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ:**

- **ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ:** ມີໜ້າທີ່ພິຈາລະນາແຜນການລວມ ແລະ ໃຫ້ທິດທາງແກ່ການຈັດຕັ້ງປະຕິບັດວຽກງານຂອງໂຄງການ.
- **ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ:** ຊີ້ນຳການຈັດຕັ້ງປະຕິບັດກິດຈະກຳ, ຮັບຜິດຊອບໃນການຈັດຊື້, ຈັດຈ້າງແລະຄຸ້ມຄອງການເງິນຂອງວຽກນີ້, ເຮັດບົດລາຍງານການການເຄື່ອນໄຫວວຽກງານໂຄງການເປັນປະຈຳລາຍງານໃຫ້ແຂວງ (ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ).
- **ກອງທຶນປົກປັກຮັກສາສິ່ງແວດລ້ອມ:** ອະນຸມັດບົດສະເໜີໂຄງການ, ສະໜອງຄູ່ມືແນະນຳການ ຈັດຕັ້ງປະຕິບັດໂຄງການ, ການຕິດຕາມແລະປະເມີນຜົນການຈັດຕັ້ງປະຕິບັດໂຄງການ ລວມທັງດ້ານເຕັກນິກ ແລະ ການເງິນ.
- **ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງ, ພຊສ ແຂວງ:** ຕາມພາລະບົດບາດຈະເປັນ ເຈົ້າການວາງແຜນ ແລະ ຈັດຕັ້ງປະຕິບັດແຜນກິດຈະກຳບູລິມະສິດ ທັງຢູ່ລະດັບແຂວງ, ເມືອງ ແລະ ບ້ານ.
- **ຫ້ອງການ ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງ:** ຈະເປັນຜູ້ຈັດຕັ້ງປະຕິບັດກິດຈະກຳ ທັງໃນລະດັບເມືອງ ແລະຊີ້ນຳໃນລະດັບບ້ານເພື່ອຮັບປະກັນການປະສານງານ ແລະ ປະກອບສ່ວນ ຂອງທຸກຫ້ອງການທີ່ກ່ຽວຂ້ອງຂອງເມືອງລົງຈັດຕັ້ງປະຕິບັດກິດຈະກຳ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງ ແລະ ລາຍງານຄວາມຄືບໜ້າໃຫ້ແກ່ ພຊສ ແຂວງ.
- **ຄະນະກຳມະການອະນຸລັກຊັບພະຍາກອນປ່າໄມ້ຂັ້ນບ້ານ:** ປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນວຽກງານໂຄງການ ແລະ ຮັບປະກັນໃຫ້ຊາວບ້ານໄດ້ເຂົ້າຮ່ວມຫລາຍທີ່ສຸດ. ນຳພາການຈັດຕັ້ງປະຕິບັດປະຈຳວັນ ແລະ ຮັບປະກັນໃຫ້ກິດຈະກຳໄດ້ຮັບຜົນສຳເລັດ ແລະ ລາຍງານບັນຫາໃຫ້ຜູ້ຊີ້ນຳຂອງເມືອງ ແລະ ພະນັກງານທີ່ກ່ຽວຂ້ອງແນໃສ່ແກ້ໄຂບັນຫາໃຫ້ ທັນການ (ໂຄງຮ່າງການຈັດຕັ້ງມີເອກະສານຂັດຕິດ).

b) *ພະນັກງານ ແລະ ການຊ່ວຍເຫຼືອທາງວິຊາການ.*

ດ້ານບຸກຄະລາກອນ ທີ່ໃຊ້ໃນການຈັດຕັ້ງປະຕິບັດໂຄງການແມ່ນເອົາພະນັກງານຂອງແຂວງທີ່ມີ ປະສົບການຈາກໂຄງການເຄືອຂ່າຍອະນຸລັກຂອງຊຸມຊົນ ເປັນຜູ້ຊ່ວຍໃນການປະຕິບັດແຜນຂອງ ໂຄງການ ໂດຍຝຶກອົບຮົມແລະສ້າງຄວາມເຂັ້ມແຂງໃຫ້ພະນັກງານຂອງເມືອງທີ່ກ່ຽວຂ້ອງຂັ້ນເມືອງ ທີ່ຈະເປັນ ຜູ້ຈັດຕັ້ງປະຕິບັດໂຄງການພາກສະໜາມແບບມີສ່ວນຮ່ວມກັບຊຸມຊົນ ໂດຍສົມທົບກັບອຳນາດການປົກຄອງຂັ້ນ ກຸ່ມບ້ານ ແລະ ບ້ານ.

ບໍ່ມີພະນັກງານຊ່ຽວຊານ.

ຄູຝຶກບາງໜ້າວຽກ ຈະແມ່ນພະນັກງານຈາກ ກຊສ ຫຼື ກປສ. ພະນັກງານຈັດຈ້າງຈັດຊື້ ຂອງ ກປສ ຈະໄດ້ໃຫ້ການສະໜັບສະໜູນໃນການຈັດຕັ້ງການຈັດຊື້ຈັດຈ້າງ.

ກປສ ຈະໄດ້ຕິດຕາມ ແລະ ປະເມີນຜົນການຈັດຕັ້ງ ແລະ ຄຸ້ມຄອງໂຄງການດັ່ງກ່າວ ຕາມລະບຽບ ເພື່ອເອົາເຂົ້າໃນບົດສະຫຼຸບຂອງ ກປສ (ເບິ່ງຂໍ້ 25).

ພະນັກງານອື່ນໆຂອງແຂວງແລະເມືອງຍັງຈະໄດ້ເຂົ້າຮ່ວມໃນການຈັດຕັ້ງກິດຈະກຳຂອງໂຄງການ ດັ່ງກ່າວ, ເມື່ອກ່ຽວຂ້ອງ.

ພະແນກແຜນການແຂວງ ແລະ ກົມທີ່ກ່ຽວຂ້ອງຈະໄດ້ປະເມີນຜົນງານຂອງໂຄງການ ໂດຍສະເພາະພະນັກງານທີ່ມງານໂຄງການ

20. ງົບປະມານສັງລວມ

ສະເໜີແຜນງົບປະມານ ແລະ ຂັດຕິດກັບບົດສະເໜີໂຄງການຍ່ອຍ (ເບິ່ງຮ່າງທີ່ໄດ້ຂັດຕິດມາພ້ອມນີ້). ໃນບົດສະເໜີນີ້ ຈະສະແດງໃຫ້ເຫັນພຽງແຕ່ ງົບປະມານສັງລວມຂອງໂຄງການຍ່ອຍ. ສົງເກດວ່າເມື່ອໂຄງການຍ່ອຍຈະໄດ້ຖືກຮັບຮອງໝົດໄລຍະໂຄງການຍ່ອຍທັງໝົດ ແຕ່ຫລັງຈາກປີທີ 1, ທຶນຮອນຈະປ່ອຍໃຫ້ນັ້ນ ແມ່ນອີງໃສ່ຜົນງານໃນປີຜ່ານມາ ອີງໃສ່ຄາດພາຍທີ່ກຳນົດໃນແຜນປີທີ່ໄດ້ຖືກຮັບຮອງເອົາ (ເບິ່ງຂໍ້ 24). ສຳລັບໂຄງການຍ່ອຍທີ່ໄດ້ຮັບຮອງແລ້ວ ຫ້ອງການ ກປສ ຈະເປັນຜູ້ເຮັດແຜນ ຈັດຊື້-ຈັດຈ້າງຕ່າງໆ

ອົງປະກອບ (ບໍ່ເກີນ 5 ອົງປະກອບລວມທັງການຄຸ້ມຄອງໂຄງການ)	ປີທີ 1	ປີທີ 2	ປີທີ 3	ປີທີ 4	ປີທີ 5	ລວມ	ທຶນສົມທົບ
ອົງປະກອບ 1. ສ້າງຄວາມອາດສາມາດໃຫ້ພະນັກງານ	42.0	60.0	25.0	20.0	17.0	164.0	-
ອົງປະກອບ 2. ສະໜັບສະໜູນການຄຸ້ມຄອງປ່າສະຫງວນ	149.5	137.5	55.0	5.0	5.0	352.0	-
ອົງປະກອບ 3. ການບໍລິຫານ ແລະ ຄຸ້ມຄອງໂຄງການ	38.0	5.0	5.0	5.0	5.0	58.0	200.0
ລາຄາລວມພື້ນຖານ	229.5	202.5	85.0	30.0	27.0	574.0	200.0
ຄ່າແຮສຸກເສີນ (5%)	11.5	10.1	4.3	1.5	1.4	28.7	-
ລວມຍອດ	241.0	212.6	89.3	31.5	28.4	602.7	200.0

21. ຄວາມຍືນຍົງ

ອະທິບາຍວ່າຜົນໄດ້ຂອງໂຄງການຍ່ອຍຈະສືບຕໍ່ ຫຼື ຮັກສາໄວ້ ຫຼັງໂຄງການສິ້ນສຸດ.

ປ່າສະຫງວນນ້ຳລາມຈະຕ້ອງໄດ້ຮັບການຄຸ້ມຄອງຕະຫລອດໄປເມື່ອຈົບໂຄງການ ທີ່ຈະຕ້ອງໄດ້ ສືບຕໍ່ ໂດຍສະເພາະແມ່ນ ອຽກຕິດຕາມກວດກາລາດຕະເວນຂອງຈຸດກວດກາແຕ່ລະຈຸດ ທີ່ໄດ້ສົມທົບຮ່ວມກັບ ທີມງານ ອະນຸລັກຄຸ້ມຄອງຊັບພະຍາ ກອນປ່າໄມ້ຂັ້ນບ້ານແຕ່ລະບ້ານ. ກອງທຶນບ້ານ ເຊິ່ງມີສັນຍາຄ້ຳປະກັນ ຈາກຜູ້ມາກູ້ຢືມ ອາດມີທຶນສະສົມບ້ານ ໃນການພັດ ທະນາຊີວິດການເປັນຢູ່ ໂດຍນຳໃຊ້ເຄື່ອງປ່າ ຂອງດົງ ແບບຍືນຍົງ ຫຼື ການຜະລິດກະສິກຳທີ່ຍືນຍົງ. ນອກນີ້ ໂຄງການນີ້ ຍັງ ໄດ້ສ້າງພະນັກງານໃຫ້ມີຄວາມສາມາດ, ແຜນການຄຸ້ມຄອງ ທີ່ຈະຊ່ວຍໃຫ້ການຄຸ້ມຄອງມີຄວາມຍືນຍົງ ແລະ ນອກນີ້, ລັດ ຖະບານແລະແຂວງ ອາດມີທຶນໃຫ້ຕື່ມ ເປັນແຕ່ລະປີ, ຕາມຄວາມຈຳເປັນ. ເມືອງຍັງຈະໄດ້ຕິດຕາມຢ່າງໃກ້ສິດ.

22. ແຜນການປະຕິບັດນະໂຍບາຍປ້ອງກັນສິ່ງແວດລ້ອມແລະສັງຄົມ

ກວດກາເບິ່ງວ່າມີຄວາມຕ້ອງການກະກຽມ ແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມ ຫຼື ບໍ່ (ກອບແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມສາມາດຄົ້ນ ຫາໄດ້ ທີ່ເວບໄຊ ກປສ).

ໂຄງການນີ້ ແນໃສ່ເພື່ອສ້າງເອົາຊຸມຊົນທີ່ຢູ່ໃນແລະອ້ອມຂ້າງພື້ນທີ່ປ່າສະຫງວນໃຫ້ເຂົ້າມາມີບົດບາດ ໃນການຄຸ້ມ ຄອງປ່າສະຫງວນ, ສັດນ້ຳ- ສັດປ່າ ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ບົນພື້ນຖານຂອງ ຄວາມສະໝັກໃຈຂອງຊຸມຊົນ ເພື່ອຫຼຸດຜ່ອນການບຸກລຸກ ແລະ ຄວາມຂັດແຍ່ງລະຫວ່າງເຂດທຳມາຫາກິນ ຂອງຊຸມຊົນກັບເຂດອະນຸລັກ, ຫຼຸດຜ່ອນຜົນ ກະທົບທາງສັງຄົມ ແລະ ການຊິດເຊີຍຊັບສົມ ຮັບຮູ້ສິດໃນ ການຄຸ້ມຄອງທີ່ດິນຕາມຮີດຄອງປະເພນີ. ໂຄງການ ຈະໄດ້ປຶກ ສາຫາລືກັບປະຊາຊົນ ຜົນກະທົບຂອງໂຄງການຍ່ອຍດັ່ງກ່າວ ທີ່ຄາດວ່າຈະມີໜ້ອຍ ແລະ ຈະໄດ້ຮັບການແກ້ໄຂ. ນອກນັ້ນ, ໂຄງການຍ່ອຍດັ່ງກ່າວ ບໍ່ມີກິດຈະກຳທີ່ຖືກຫ້າມ; ດັ່ງນັ້ນ ຈຶ່ງບໍ່ໄດ້ເຮັດແຜນປ້ອງກັນສິ່ງແວດລ້ອມແລະສັງຄົມ.

23. ການມີສ່ວນຮ່ວມຂອງຊຸມຊົນ ລວມທັງບັນຫາບົດບາດຍິງ-ຊາຍ ໃນລະດັບບ້ານ

ເບິ່ງຕາມເອກະສານແນະນຳ ກ່ຽວກັບຂັ້ນຕອນປະຕິບັດ ໃນແຜນການມີສ່ວນຮ່ວມຂອງຊຸມຊົນຊຶ່ງສາມາດຄົ້ນຫາໄດ້ທີ່ເວບໄຊ ກປສ.

ຊຸມຊົນຈະເຂົ້າຮ່ວມໃນການວາງແຜນແລະຄຸ້ມຄອງປ່າປ້ອງກັນເຂດອ່າງຮັບນ້ຳຮຸ່ງຕອນເໜືອຊຶ່ງເຂົາເຈົ້າ ຈະເຂົ້າໃຈ, ເຫັນດີນຳ ແລະ ເປັນເຈົ້າການໃນການຄຸ້ມຄອງ, ນຳໃຊ້ ແລະ ປົກປ້ອງສິດແລະໜ້າທີ່ຂອງເຂົາເຈົ້າຫຼາຍກວ່າເກົ່າ; ອັນຈະເຮັດໃຫ້ ຊຸມຊົນໄດ້ເຂົ້າຮ່ວມດ້ວຍຄວາມສະໝັກໃຈໃນການອະນຸລັກຊັບພະຍາກອນຂອງບ້ານແລະປັບປຸງຊີວິດການເປັນຢູ່ຂອງຕົນ. ໃນການເຂົ້າຮ່ວມດັ່ງກ່າວແມ່ຍິງຫຼືອົງການແມ່ຍິງໃນທ້ອງຖິ່ນຈະໄດ້ຈັດໃຫ້ເຂົ້າຮ່ວມ. ແຕ່ໃນນີ້, ຈະໄດ້ເຮັດການປຶກສາຫາລື ລະອຽດຕື່ມໃນເວລາຈັດຕັ້ງປະຕິບັດໂຄງການໂດຍສະເພາະເມື່ອປຶກສາຫາລືແຜນຄຸ້ມຄອງປ່າປ້ອງກັນເພື່ອໃຫ້ເຂົາເຈົ້າເຫັນດີ ນຳ.

24. ບັນຫາບົດບາດຍິງ-ຊາຍ (ການເຊື່ອມສານ)

ອະທິບາຍກ່ຽວກັບໂຄງການຍ່ອຍ ທີ່ຍິນຍອມກັບນະໂຍບາຍຂອງລັດ ໃນການເອົາໃຈໃສ່ ຕໍ່ບັນຫາບົດບາດຍິງ-ຊາຍ ພາຍໃຕ້ໂຄງການ.

ການວາງແຜນຄົນໃສ່ກິດຈະກຳຕ່າງໆຂອງໂຄງການຈະໄດ້ຄຳນຶງກ່ຽວກັບບັນຫາບົດບາດຍິງ - ຊາຍເຊິ່ງຢ່າງໜ້ອຍ 20% ຂອງຜູ້ເຂົ້າຮ່ວມຕ້ອງເປັນເພດຍິງ. ໜ້າວຽກກ່ຽວກັບໂຄງການຍ່ອຍນີ້ຈະແມ່ນການກຳນົດຜູ້ເຂົ້າຮ່ວມການຝຶກອົບຮົມ

, ການເຂົ້າຮ່ວມກອງປະຊຸມ ຈະໄດ້ກວດເບິ່ງສັດສ່ວນການເຂົ້າຮ່ວມຂອງເພດຍິງ.ນອກນັ້ນໃນລະດັບຊຸມຊົນຈະໄດ້ໃຫ້ແມ່ຍິງເຂົ້າຮ່ວມໃນຂະບວນການສ້າງຈິດສຳນຶກເວລາເຜີຍແຜ່ແຜນການ, ການພັດທະນາຊີວິດການເປັນຢູ່ຂອງແຕ່ລະຄອບຄົວ ແລະການອະນຸລັກທຳມະຊາດ.

25. ເງື່ອນໄຂການປະຕິບັດຜົນງານປະຈຳປີທີ່ໄດ້ຕົກລົງກັນ

ລາຍການເປົ້າໝາຍທີ່ໄດ້ຕົກລົງວ່າຈະໄດ້ສຳເລັດ ເພື່ອເປັນເງື່ອນໄຂ ການອະນຸມັດງົບປະມານໃນປີຕໍ່ໄປ

ໄດ້ຕົກລົງໃນເງື່ອນໄຂທີ່ວ່າ:

- ປະຕິບັດຖືກຕ້ອງ ດ້ານຄວາມໂປ່ງໃສ ແລະ ຄວາມຕ້ອງການໃນການປ້ອງກັນຜົນກະທົບ (ຢ່າງໜ້ອຍໄດ້ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ມາ).
- ປະຕິບັດຖືກຕ້ອງຕາມມາດຖານການລາຍງານ (ດ້ານຈຳນວນ, ຄຸນນະພາບ ແລະ ເວລາ) (ຢ່າງໜ້ອຍໄດ້ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ມາ).
- ໃນປີທີ 1 ຢ່າງໜ້ອຍ 50 % ຂອງກິດຈະກຳແຜນປີ ໄດ້ສຳເລັດ. ໃນປີທີ 2 ແລະ ຕໍ່ໄປຢ່າງໜ້ອຍ 70 % ຂອງແຕ່ລະກິດຈະກຳແຜນປີ ໄດ້ສຳເລັດ.
- ເປົ້າໝາຍຂອງຜົນຮັບໃນປີທີພວມປະຕິບັດຢູ່ນັ້ນ ໄດ້ມີການວັດແທກ, ປະເມີນຜົນ ແລະ ສະແດງໃຫ້ເຫັນຄວາມຄືບໜ້າທີ່ຈະສຳເລັດຕາມເປົ້າໝາຍ.
- ແຜນວຽກ ແລະ ງົບປະມານ ໃນປີໃໝ່ ໄດ້ກະກຽມ ໂດຍຜ່ານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ເຫັນດີຮັບຮອງໂດຍສະພາບໍລິຫານ ກປສ.

26. ບັນຊີກວດເອກກະສານຂັດຕິດ

ຈົ່ງຮັບປະກັນວ່າ ໄດ້ຂັດຕິດເອກກະສານດັ່ງຕໍ່ໄປນີ້ ໂດຍອີງໃສ່ຮ່າງທີ່ສະໜອງໃຫ້:

- ☒ ກອບຜົນໄດ້ຮັບ.
- ☒ ແຜນງົບປະມານຂອງໂຄງການຍ່ອຍທັງໝົດ (a) ແຍກຕາມອົງປະກອບ *(ເອກກະສານຂັດຕິດ 2.1)* ແລະ (b) ແຍກປະເພດ*(ເອກກະສານຂັດຕິດ 2.2).*
- ☒ ແຜນວຽກລະອຽດຂອງປີທີ 1 ແຍກຕາມອົງປະກອບ*(ເອກກະສານຂັດຕິດ 3).*
- ☒ ແຜນຈັດຊື້ແລະຈັດຈ້າງ *(ເອກກະສານຂັດຕິດ 4)*
- □ ແຜນຄຸ້ມຄອງສິ່ງແວດລ້ອມຂອງໂຄງການຍ່ອຍ, ຖ້າຫາກຕ້ອງເຮັດ *(ເອກກະສານຂັດຕິດ 5)*

ວັນທີ 15 ທັນວາ 2015

ຮັບຮູ້ ແລະ ເຫັນດີ ໂດຍ:	ສະເໜີໂດຍ:
ຫົວໜ້າພະແນກ	ຫົວໜ້າຂະແໜງ
ຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ແຂວງ	ຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງຜົ້ງສາລີ
ສຸວິຍາ ແສງດາລາ	ວຽງສັກ ພົມມະສິ